ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງປ້ອງກັນຄວາມສະຫງົບ
ກົມໃຫຍ່ສັນຕິບານ
ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ

ເລກທີ...732........./ກຕມ

ນະຄອນຫຼວງວຽງຈັນ, ວັນທີ..03.ເມສາ.2020

# ແຈ້ງການເພີ່ມເຕີມ

**ເຖິງ :** ບັນດາ ດ່ານຕຳຫຼວດກວດຄົນເຂົ້າ-ອອກເມືອງ ສາກົນ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ຍົກລະດັບຄວາມເຂັ້ມງວດໃນການຄຸ້ມຄອງການເຂົ້າ-ອອກ ສປປ ລາວ ໃນໄລຍະ ການແຜ່ລະບາດຂອງພະຍາດ ໂຄວິດ-19 (COVID-19)

- ອີງຕາມ ຄຳສັ່ງ ຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 (COVID-19);
- ອີງຕາມ ທິດຊີ້ນຳຂອງ ທ່ານ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ໃນຄັ້ງວັນທີ 03 ເມສາ 2020;
- ອີງຕາມ ຂໍ້ຕົກລົງ ຂອງທ່ານ ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 084/ປກສ, ລົງວັນທີ 03 ກຸມພາ 2010 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ;
- ອີງຕາມ ສະພາບທີ່ເກີດຕົວຈິງ ຂອງການການແຜ່ ລະບາດຂອງພະຍາດ ໂຄວິດ-19 (COVID-19) ຢູ່ ສປປ ລາວ ກໍຄືໃນທົ່ວໂລກ.

ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ປັດຈຸບັນ ໃນ ສປປ ລາວ ກວດພົບ ຜູ້ຕິດເຊື້ອພະຍາດ ໂຄວິດ-19 (COVID-19) ຈຳນວນໜຶ່ງ. ເພື່ອຍົກລະດັບມາດຕະການສະກັດກັ້ນ, ກັນການແຜ່ລະບາດ, ຄວບຄຸມ ແລະກຽມຄວາມພ້ອມ ຮອບດ້ານ ເພື່ອປ້ອງກັນ ບໍ່ໃຫ້ເກີດການແຜ່ລະບາດ ເປັນວົງກວ້າງ ຢູ່ ສປປ ລາວ, ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ຈຶ່ງອອກມາດຕະການ ເພີ່ມເຕີມ ເພື່ອຄຸ້ມຄອງ ຢ່າງເຂັ້ມງວດ ໃນການເດີນທາງເຂົ້າ-ອອກ ສປປ ລາວ ຂອງບຸກຄົນ ຜ່ານບັນດາດ່ານສາກົນ ໃນຂອບເຂດທົ່ວປະເທດ, ໃຫ້ປະຕິບັດດັ່ງນີ້:

1. ບໍ່ອະນຸຍາດໃຫ້ບຸກຄົນ ເດີນທາງເຂົ້າ-ອອກ ສປປ ລາວ ຜ່ານດ່ານສາກົນ; ຍົກເວັ້ນ ການປິ່ນປົວສຸຂະພາບ (ກໍລະນີສຸກເສີນເທົ່ານັ້ນ), ການຂົນສົ່ງສິນຄ້າ, ເຄື່ອງອຸປະໂພກ ແລະບໍລິໂພກ, ຂົນສົ່ງນ້ຳມັນ ແລະຂົນສົ່ງສິ່ງອື່ນໆ ທີ່ຈຳເປັນ;
2. ໃຫ້ເຈົ້າໜ້າທີ່ ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານ ປະສານສົມທົບກັບເຈົ້າໜ້າທີ່ ຕຳຫຼວດກວດຄົນເຂົ້າ-ອອກເມືອງ ຂອງດ່ານເຊິ່ງໜ້າ ເພື່ອຈັດຕັ້ງປະຕິບັດຕາມຂໍ້ 01 ຂອງແຈ້ງການສະບັບນີ້ ໃຫ້ມີຄວາມສະດວກ, ຄ່ອງຕົວ ແລະໄດ້ຮັບຜົນດີ, ໃນກໍລະນີ ພົບບັນຫາຫຍຸ້ງຍາກ, ສັບສົນ ໃຫ້ລາຍງານຂັ້ນເທິງ ມີທິດຊີ້ນຳ;
3. ກໍລະນີ ຖ້າມີແຮງງານລາວ ຕົກຄ້າງຢູ່ດ່ານເບື້ອງ ຣາຊະອານາຈັກ ໄທ ເປັນຈຳນວນຫຼາຍ ໃຫ້ຮີບຮ້ອນ ປະສານສົມທົບ ກັບດ່ານເຊິ່ງໜ້າ ແລະລາຍງານຂັ້ນເທິງຢ່າງຮີບດ່ວນ ເພື່ອມີວິທີແກ້ໄຂໃຫ້ຖືກຕ້ອງ ແລະ ທັນເວລາ.

ແຈ້ງການສະບັບນີ້ ເປັນການເພີ່ມເຕີມ ແລະ ປັບປຸງ ບາງເນື້ອໃນ ຂອງແຈ້ງການ ສະບັບເລກທີ 703/ກຕມ, ລົງວັນທີ 30 ມີນາ 2020 ແລະ ໃນກໍລະນີມີການປ່ຽນແປງ ຈະມີແຈ້ງການສະບັບອື່ນມາປ່ຽນແທນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ເຊັນແທນຫົວໜ້າກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ

ຮອງຫົວໜ້າກົມ

ພູວັນ ໄຊຍະສິດ

**ຜູ້ປະສານງານ:**
ພັທ ເພັດດາວົງ ແກ້ວກັນຍາ 020 5552 6405
ຮທ ສຸກພາລັກ ທຳມະວົງ 020 5679 6061